INSTITUT FRANÇAIS
LAOS ສະຖາບັນຝຣັ່ງ

# ຮັບສະໝັກພະນັກງານ

ສະຖາບັນຝຣັ່ງທີ່ນະຄອນຫຼວງວຽງຈັນ, ຫ້ອງການຂອງສະຖານທູດຝຣັ່ງ ປະກາດຮັບສະໝັກພະນັກງານ ຜູ້ຊ່ວຍດ້ານວັດທະນະທຳ/ການສື່ສານ.

| | |
|---|---|
| ຜູ້ວ່າຈ້າງງານ | ສະຖາບັນຝຣັ່ງປະຈຳນະຄອນຫຼວງວຽງຈັນ, ສປປລາວ |
| ຕຳແໜ່ງ | ຜູ້ຊ່ວຍດ້ານວັດທະນະທຳ ແລະ ການສື່ສານ |
| ລາຍລະອຽດຕຳແໜ່ງ | ພາຍໃຕ້ຄວາມຮັບຜິດຊອບໂດຍກົງຂອງຮອງຫົວໜ້າຜູ້ບໍລິຫານດ້ານວັດທະນະທຳ ແລະ ອຳນາດຂອງຜູ້ບໍລິຫານສະຖາບັນຝຣັ່ງ, ຜູ້ຊ່ວຍດ້ານວັດທະນະທຳ/ການສື່ສານຈະໄດ້ເຂົ້າຮ່ວມໃນການສ້າງສັນລາຍການຕ່າງໆດ້ານວັດທະນະທຳປະຈຳປີ ແລະ ດຳເນີນການຈັດງານ, ປະສານງານທົ່ວໄປຂອງສະຖາບັນ. ຜູ້ຊ່ວຍຈະໄດ້ຄຸມການຈັດງານ, ປະສານງານກັບພາກສ່ວນກ່ຽວຂ້ອງ, ບໍລິການ ແລະ ໃຫ້ຄວາມຊ່ວຍເຫຼືອແກ່ສິນລະປິນ, ຕິດຕາມດ້ານເຕັກນິກ ແລະ ເຄື່ອງສຽງໃນງານ. ຍັງໄດ້ຄົ້ນຄວ້າຊອກຫາຜູ້ຮ່ວມງານໃນການເຜີຍແຜ່ຂໍ້ມູນຕ່າງໆດ້ານວັດທະນະທຳ ແລະ ມີສາຍພົວພັນທີ່ດີກັບບັນດາສະຖາບັນ ແລະ ສິນລະປິນທ້ອງຖິ່ນ, ໃນພູມມິພາກຕ່າງໆ ແລະ ສິນລະປິນຝຣັ່ງ, ແລະ ຮອບຮູ້ຂໍ້ມູນຂ່າວສານຕ່າງໆ. ນອກນັ້ນ, ຜູ້ຊ່ວຍດ້ານວັດທະນະທຳຍັງຕ້ອງໄດ້ປະສານງານການສື່ສານຂອງສະຖາບັນຝຣັ່ງ, ວາງແຜນການຈັດປ້າຍພິມງານ ແລະ ສິ່ງພິມເອເລັກໂທຣນິກການບໍລິການຕ່າງໆ, ເຜີຍແຜ່ການສື່ສານທີ່ກ່ຽວຂ້ອງກັບການຈັດງານ ແລະ ກິດຈະກຳທັງໝົດຂອງສະຖາບັນຝຣັ່ງ ທີ່ກ່ຽວຂ້ອງກັບຫຼັກສູດຮຽນພາສາ ຫຼື ກິດຈະກຳທາງວັດທະນະທຳ. |
| ໂປຣຟາຍ | • ມີຄວາມສາມາດສູງໃນການຈັດງານກິດຈະກຳຕ່າງໆທາງວັດທະນະທຳ,<br>• ມີຄວາມຮູ້ທາງວັດທະນະທຳຝຣັ່ງ ແລະ ວັດທະນະທຳລາວເປັນຢ່າງດີ,<br>• ສາມາດຈັດການຫຼາຍໂຄງການພ້ອມກັນ,<br>• ນຳໃຊ້ສື່ອອນລາຍເປັນຢ່າງດີ,<br>• ມີຄວາມສາມາດໃນການສື່ສານພາຍນອກໄດ້ດີ. |
| ຄວາມສາມາດ | • ມີທັກສະສູງໃນການຂຽນພາສາລາວ,<br>• ສາມາດນຳໃຊ້ພາສາຝຣັ່ງເປັນຢ່າງດີ, ຖ້າໄດ້ພາສາອັງກິດຈະພິຈາລະນາເປັນພິເສດ.<br>• ສາມາດປັບໂຕໃນການເຮັດວຽກໄດ້ດີ ແລະ ມີທັກສະເປັນຜູ້ຟັງທີ່ດີ<br>• ມີຄວາມຮັບຜິດຊອບສູງຕໍ່ໜ້າທີ່ ທີ່ຖືກມອບໝາຍ<br>• ມີທັກສະໃນການສື່ສານທີ່ດີ |
| ສິ່ງທີ່ຮັບຮູ້ ຫຼື ຄຸນນະສົມບັດສ່ວນຕົວທີ່ຕ້ອງການ | • ມີຄວາມພ້ອມໃນການເຮັດທຸກວຽກງານທີ່ຖືກມອບໝາຍ,<br>• ມີມະນຸດສຳພັນດີ,<br>• ມີແນວທາງໃນການວາງແຜນ ແລະ ຈັດການໜ້າວຽກໄດ້ດີ. |
| ເງື່ອນໄຂໃນການເຮັດວຽກ | ໂມງເຮັດວຽກອາດມີການປ່ຽນແປງຂຶ້ນກັບໜ້າວຽກ, ຄວາມຮັບຜິດຊອບ ແລະ ແນວທາງໃນການເຮັດວຽກທີ່ບັນຈຸໄວ້. |
| ປະເພດສັນຍາ | ສັນຍາເຮັດວຽກເຕັມເວລາລວມກັບຊ່ວງເວລາທົດລອງງານສອງເດືອນ. |

ເອກະສານຕິດຂັດ ສິ່ງຊີວະປະຫວັດຫຍໍ້ (CV) ແລະ ຂຽນແຮງຈູງໃຈໃນການສະໝັກວຽກ (Motivation letter) ກ່ອນວັນທີ 14 ຕຸລາ 2019 ຫາ: info@if-laos.org